**ມິຊຊາອາທິດທີ 3 ກຳນົດປາສກາ**

**ວັນທີ 1 ພຶດສະພາ 2022**



**ພຣະວໍລະສານໂດຍນັກບຸນຢວງ 21, 1-14**

ໃນເວລານັ້ນພຣະເຢຊູເຈົ້າຊົງປະຈັກມາຫາພວກລູກສິດອີກຢູ່ຮີມຝັ່ງທະເລສາບຕີເບຣີອັດ. ເລື່ອງລາວເປັນດັ່ງນີ້ຄື: ຊີມອນເປໂຕຣ, ໂທມາສຜູ້ມີຊື່ນ້ອຍວ່າດີດີມ, ນາທານາແອນໄທບ້ານການາແຂວງກາລີເລ , ບຸດຊາຍຂອງເຊເບເດແລະລູກສິດຂອງພຣະອົງອີກສອງຄົນຢູ່ຮ່ວມກັນ. ຊີມອນເປໂຕເວົ້າກັບໝູ່ວ່າ: ເຮົາຈະໄປຫາປາ. ລູກສິດຜູ້ອື່ນເລີຍວ່າ: ໝູ່ເຮົາກໍຈະໄປນຳ. ແລ້ວກໍພາກັນລົງເຮືອ. ໝົດຄືນນັ້ນບໍ່ໄດ້ປາຈັກໂຕ.

ພໍສະວ່າງແຈ້ງ, ພຣະເຢຊູເຈົ້າກໍປະຈັກມາຢູ່ຮີມຝັ່ງ ແຕ່ພວກລູກສິດບໍ່ຮູ້ວ່າແມ່ນພຣະອົງ. ພຣະເຢຊູເຈົ້າກ່າວກັບພວກເຂົາວ່າ: ພວກລູກເອີຍ! ໄດ້ປາບໍ? ພວກເຂົາທູນຕອບວ່າ: ບໍ່ໄດ້ຫຍັງ. ພຣະອົງຈຶ່ງກ່າວວ່າ: ຕຶກມອງລົງທາງເບື້ອງຂວາເຮືອແລະຈະໄດ້. ພວກເຂົາກໍທຳຕາມແລະແກ່ມອງຂຶ້ນບໍ່ໄຫວ, ຍ້ອນຖືກປາຈຳນວນຫລາຍ.

ລູກສິດຜູ້ພຣະເຢຊູເຈົ້າຮັກແພງເວົ້າກັບເປໂຕວ່າ: ແມ່ນພຣະອົງເຈົ້າ. ໄດ້ຍິນວ່າແມ່ນພຣະອົງເຈົ້າຊີມອນເປໂຕກໍເອົາແພມານຸ່ງ ຍ້ອນເພິ່ນໄດ້ເປືອຍໂຕ, ແລ້ວໂດດລົງທະເລ. ສ່ວນລູກສິດຜູ້ອື່ນໄປກັບເຮືອທັງແກ່ມອງໄປພ້ອມຍ້ອນຢູ່ໄກຝັ່ງປະມານ 200 ສອກ. ເມື່ອຂຶ້ນຝັ່ງແລ້ວ, ພວກເຂົາກໍເຫັນມີໄຟດັງໄວ້ແລ້ວ. ມີປາປີ້ງຄ້າງໄຟຢູ່ແລະເຂົ້າຈີ່ດ້ວຍ. ພຣະເຢຊູເຈົ້າກ່າວບອກພວກເຂົາວ່າ: ໄປເອົາປາຕຶກມອງໄດ້ນັ້ນມາດຽວນີ້. ຊີມອນເປໂຕຈຶ່ງລົງໄປໃນເຮືອແກ່ມອງຂຶ້ນຝັ່ງ, ມີປາໃຫຍ່ຄາຢູ່ 153ໂຕ. ແມ່ນແຕ່ຖືກປາຫລາຍປານນີ້ມອງກໍບໍ່ຂາດ.

ພຣະເຢຊູເຈົ້າບອກພວກເຂົາວ່າ: ຈົ່ງມາກິນເຂົ້າ. ບໍ່ມີໃຜໃນພວກລູກສິດກ້າຖາມວ່າພຣະອົງແມ່ນຜູ້ໃດ. ຍ້ອນໃຜກໍຮູ້ດີວ່າແມ່ນພຣະອົງເຈົ້າແທ້. ພຣະເຢຊູເຈົ້າສະເດັດມານັ່ງໃກ້ໆ, ຈັບເອົາເຂົ້າຈີ່ຢາຍໃຫ້ພວກເຂົາແລ້ວຢາຍປາໃຫ້ດັ່ງດຽວກັນ.

ນີ້ແມ່ນເທື່ອທີສາມທີ່ພຣະເຢຊູເຈົ້າປະຈັກມາຫາພວກລູກສິດ ຫລັງຈາກໄດ້ກັບເປັນຄືນມາຈາກພວກຜູ້ຕາຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າຊຶ່ງພວກເຮົາໄດ້ຟັງວັນນີ້ແມ່ນກ່າວເຖິງການປະຈັກມາຂອງພຣະເຢຊູເຈົ້າເປັນຄັ້ງທີສາມໃຫ້ກັບພວກລູກສິດ ຫລັງຈາກທີ່ພຣະອົງໄດ້ກັບເປັນຄືນມາ. ແຕ່ລະຄັ້ງທີ່ພຣະເຢຊູເຈົ້າປະຈັກມາ, ພວກລູກສິດລ້ວນແຕ່ຢູ່ໃນຄວາມຢ້ານກົວ, ຄວາມໂສກເສົ້າແລະສິ້ນຫວັງ. ສ່ວນພຣະເຢຊູເຈົ້າຜູ້ກັບເປັນຄືນມາຈາກຄວາມຕາຍ, ພຣະອົງນຳຄວາມຍິນດີ, ສັນຕິສຸກແລະຄວາມຫວັງມາໃຫ້ພວກລູກສິດ.

ດັ່ງໃນວາຈາພຣະເຈົ້າວັນນີ້, ເມື່ອພວກລູກສິດກຳລັງຢູ່ໃນຄວາມສິ້ນຫວັງ, ຍ້ອນພວກເຂົາໄດ້ອິດເມື່ອຍຕະຫລອດຄືນແຕ່ບໍ່ໄດ້ປາຈັກໂຕ. ຄວາມອິດເມື່ອແລະຄວາມສິ້ນຫວັງນີ້ທຳໃຫ້ພວກເຂົາບໍ່ສາມາດຈື່ຈຳພຣະເຢຊູເຈົ້າໄດ້ເມື່ອພຣະອົງປະຈັກມາຫາພວກເຂົາຢູ່ແຄມທະເລຕິເບລີອັດ. ພຣະອົງໄດ້ສັ່ງໃຫ້ພວກເຂົາຖິ້ມມອງລົງທາງຂວາຂອງເຮືອເພື່ອຈັບປາ. ຈາກນັ້ນ, ພວກເຂົາກໍໄດ້ປາເປັນຈຳນວນຫລາຍ, ຈົນມອງເກືອບຂາດ. ຄວາມພິດສະຫວົງນີ້ທຳໃຫ້ຢວງ, ລູກສິດຊຶ່ງພຣະເຢຊູເຈົ້າຮັກແພງຈື່ຈຳພຣະອົງໄດ້ແລະບອກໃຫ້ເປໂຕຮູ້ຈັກດ້ວຍ.

ການປະຈັກມາຂອງພຣະເຢຊູເຈົ້າຄັ້ງນີ້ສະທ້ອນໃຫ້ພວກເຮົາເຫັນວ່າ ພຣະອົງຊົງຢູ່ຄຽງຂ້າງພວກເຮົາສະເໝີ ບໍ່ວ່າຈະເປັນຍາມຫຍຸ້ງຍາກ, ອິດເມື່ອຍແລະສິ້ນຫວັງ. ພຣະອົງບໍ່ໄດ້ປະຖິ້ມພວກເຮົາ, ແຕ່ຊົງຢູ່ກັບພວກເຮົາສະເໝີເພື່ອຊ່ວຍພວກເຮົາໃຫ້ພົບກັບທາງອອກຂອງບັນຫາຊີວິດ. ເພາະພຣະອົງຊົງຮັກພວກເຮົາ. ແລະພຣະອົງເປັນພຣະຜູ້ກູ້ໄຖ່ພວກເຮົາ. ແຕ່ພວກເຮົາຈື່ຈຳພຣະອົງໄດ້ບໍ? ພວກເຮົາຄິດຫາພຣະອົງບໍເມື່ອພວກເຮົາຢູ່ໃນຄວາມຫຍຸ້ງຍາກແລະສິ້ນຫວັງ? ພວກເຮົາໄດ້ຟັງສຽງພຣະອົງທີ່ກ່າວກັບພວກເຮົາໃນຍາມພົບກັບບັນຫາຊີວິດບໍ? ຫລືພວກເຮົາຫັນໄປເພິ່ງພຣະອື່ນ, ໄປເພິ່ງສິ່ງງົມງວາຍທັງຫລາຍ? ສິ່ງນີ້ສະແດງອອກເຖິງການຂາດຄວາມເຊື່ອຂອງພວກເຮົາໃນພຣະເຢຊູຜູ້ໄດ້ຊະນະໂລກແລະຄວາມຕາຍ.

**ພາວະນາ**

ໂອພຣະເຢຊູເຈົ້າ, ໃນວັນອາທິດທີສາມກຳນົດປາສການີ້, ວັນທີ່ພຣະເຢຊູເຈົ້າກັບເປັນຄືນມາແລະປະຈັກມາຫາພວກລູກສິດ. ແລະວັນນີ້, ພຣະອົງກໍປະຈັກມາຫາລູກໃຫ້ພິທີບູຊາມິຊຊາ. ໂຜດຊ່ວຍລູກໃຫ້ພົບກັບພຣະອົງແລະຈື່ຈຳພຣະອົງໄດ້. ໂຜດຊ່ວຍລູກໃຫ້ເຊື່ອໝັ້ນໃນວາຈາຂອງພຣະອົງແລະປະຕິບັດຕາມສິ່ງທີ່ພຣະອົງສັ່ງບອກ. ເພື່ອລູກຈະໄດ້ພົບກັບຄວາມຍິນດີ, ຄວາມຫວັງແລະຄວາມຮອດໃນພຣະອົງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ